**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

**ກະຊວງອຸດສະຫະກຳ ແລະ ການຄ້າ** ເລກທີ່ 1592/ ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ່ 26 ສິງຫາ 2013

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທບສະບານ
- ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ

**ເລື່ອງ** : ບັນຊີປະເພດທຸລະກິດເກືອດຫ້າມ

ເພື່ອໃຫ້ປະຊາຊົນບັນດາເຜົ່າ ແລະ ນັກລົງທຶນ (ພາຍໃນ (ພາຍໃນ / ຕ່າງປະເທດ) ມີຄວາມສະດວກໃນການພິຈາລະນາ ກ່ອນການປະກອບທຸລະກິດໃດໜຶ່ງ ຢູ່ປະເທດເຮົາ ວ່າ : ມີທຸລະກິດໃດທີ່ກົດໝາຍເກືອດຫ້າມ, ກະຊວງອຸດສະຫະກຳ ແລະ ການຄ້າ (ບົນພື້ນຖານການຄົ້ນຄວ້າ ສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ), ແຈ້ງມາຍັງພາກສ່ວນທີ່ກ່ຽວຂອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້ :

1. ປະເພດທຸລະກິດເກືອດຫ້າມ ແມ່ນປະເພດທຸລະກິດ ທີ່ບໍ່ອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ;

2. ການອະນຸຍາດ ຫຼື ຂຶ້ນທະບຽນວິສາຫະກິດໃຫ້ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ຖືກຕ້ອງຕາມແຈ້ງການສະບັບນີ້ ລ້ວນແຕ່ເປັນໂມຄະ, ຜູ້ລະເມີດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ;

3. ລາຍການປະເພດທຸລະກິດເກືອດຫ້າມ ກຳນົດໃນບັນຊີ ຂໍ 01-2013 (ຄັດຕິດມາພ້ອມນີ້);

4. ໃນໄລຍະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ຫາກພາກສ່ວນ ຫຼື ຂະແໜງການໃດເຫັນວ່າມີອັນໃດຍັງບໍ່ທັນສອດຄ່ອງ ຢາກເພີ້ມເຂົ້າ ຫຼື ຕັດອອກຈາກບັນຊີດັ່ງກ່າວ ໃຫ້ແຈ້ງກະຊ່ວງອຸດສາຫະກຳ ແລະ ການຄ້າເພື່ອປັບປຸງ ປະກາດໃຊ້ເພີ້ມເຕີມຕໍ່ໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

## ບັນຊີ ຂໍ 01 – 2013

## ບັນຊີປະເພດທຸກລະກິດເກືອດຫ້າມດຳເນີນທຸກລະກິດ ຢູ່ ສປປ ລາວ

| ລ/ດ | ປະເພດທຸກລະກິດ | ນິຕິກຳ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| 1 | ສານເຄມີອັນຕະລາຍປະເພດທີ່ 1 (ເອກະສານຊ້ອນທ້າຍ 01 ຂອງຂໍ້ຕົກລົງສະບັບເລກທີ1041/ອຄ.ອກທ, ລົງວັນທີ 28/05/2012) | - ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທາດ ແລະ ທາດເຄມີອຸດສາຫະກຳ ເລກທີ 1041/ ອຄ.ອກທ, ລົງວັນທີ28/05/ 2012)<br>- ດຳລັດວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 6 ເມສາ 2011 | ກຊ ອຄ |
| 2 | ແຮ່ທາດກຳມັນຕະພາບລັງສີທຸກຊະນິດ | - ດຳລັດວ່າດ້ວຍການສົ່ງອອຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09/06/2008 ແລະ ກົດໝາຍວ່າດ້ວຍແຮ່ທາດ ເລກທີ 02/ສພຊ, ລົງວັນທີ 20/12/2011 | ກຊ ພບ |
| 3 | ລູກກະສູນ ແລະ ອາວຸດທຸກຊະນິດ( ຍົກເວັ້ນທາດລະເບີດ ເພື່ອຮັບໃຊ້ອຸດສາຫະກຳແຕ່ຕ້ອງໄດ້ຮັບອານຸຍາດສະເພາະ), ພາຫະນະຮັບໃຊ້ສົງຄາມ | - ກົດໝາຍອາຍາເລກທີ12/ສພຊ, ລົງວັນທີ 9/ພະຈິກ 2005<br>- ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດຢູ່ ສປປ ລາວເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001 | ກຊ ປທ |
| 4 | ຝິ່ນ, ເມັດຝິ່ນ, ດອກຝິ່ນ, ແກ່ນຝິ່ນ, ດອກຝິ່ນແຫ້ງ, ຝິ່ນສຳເລັດຮູບ. ອື່ນໆທີ່ເຮັດຈາກຝິ່ນ, ໃບໂກໂກ້, ກັນຊາໃນຮູບແບບຕ່າງໆ, ໂຄເຄນ ແລະ ອະນຸພັນຂອງມັນ | - ກັດໝາຍອາຍາເລກທີ 12/ສພຊ, ລົງວັນທີ 9 ພະຈິກ 2005<br>- ກົດໝາຍວ່າດ້ວຍຢາເສບຕິດ ເລກທີ 10/ສພຊ, ວັນທີ 25/12/2007<br>- ດຳລັດຈັດຕັ້ງປະຕິບັດກົດໝາຍດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20 ກຸມພາ 2009 | ກຊ ປທ |
| 5 | ເຈ້ຍພິມເງິນ, ນ້ຳມຶກພິມເງິນ, ເຄື່ອງຈັກພິມເງິນ ແລະ ເຄື່ອງຈັກຫຼອມເງິນຫຼຽນ | - ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999 | ທຫລ |
| 6 | ປະເພດທຸກລະກິດເກືອດຫ້າມຕ່າງໆຕາມທີ່ກຳນົດໄວໃນລະບຽບກົດໝາຍທີ່ກ່ຽວຂອງ | - ບັນດາລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ | ຂະແໜ່ງການ ກ່ຽວຂ້ອງ |

ໝາຍເຫດ: ປະເພດທຸກລະກິດໃນບັນຊີ 01 – 2013 ແມ່ນໄດຄົ້ນຄ້ວາ ແລະ ລອບລວມມາຈາກ ຄຳສະເໜີຂອງບັນດາກະຊວງທີ່ກ່ຽວຂ້ອງ